ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 26 ຫາ 30 ສິງຫາ 2024




ພິທີເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການສຶກສາຄວາມເປັນໄປໄດ້
ໃນການພັດທະນາລະບົບໂປແກຣມຊອບແວ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ພິທີເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການສຶກສາຄວາມເປັນໄປໄດ້ ໃນການພັດທະນາລະບົບໂປຣແກຣມ (Software)

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ພິທີເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການສຶກສາຄວາມເປັນໄປໄດ້ ໃນການພັດທະນາລະບົບໂປຣແກຣມ (Software) ເພື່ອຫັນວຽກງານຂອງກະຊວງກະສິກຳ ແລະ ປ່າໄມ້ ເປັນທັນສະໄໝ ລະຫວ່າງກະຊວງກະສິກຳ ແລະ ປ່າໄມ້ ຕາງໜ້າໂດຍກົມແຜນການ ແລະ ການຮ່ວມມື ເຊັນໂດຍທ່ານ ປອ ບຸນເດດ ສຸດທະວີໄລ ຫົວໜ້າກົມແຜນການ ແລະ ການຮ່ວມມື ແລະ ບໍລິສັດ ເອໄອດີຊີ ເທັກ ຈຳກັດຜູ້ດຽວ ເຊັນໂດຍ ທ່ານ ພົດສະພາ ພູມມະສັກ ປະທານ ບໍລິສັດ ໂດຍການເຊັນເປັນພະຍານຮ່ວມຂອງຫົວໜ້າກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ຮອງປະທານບໍລິສັດ ແລະ ຫົວໜ້າພະແນກຈາກບໍລິສັດເອໄອດີຊີ ໄດ້ຈັດຂຶ້ນທີ່ສະໂມສອນກະຊວງກະສິກຳ ແລະ ປ່າໄມ້ ໃນວັນທີ 26 ກໍລະກົດ 2024, ໂດຍໃຫ້ກຽດເຂົ້າຮ່ວມເປັນປະທານ ແລະ ສັກຂີພະຍານຂອງ ທ່ານ ຮສ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມ, ພິທີເຊັນບົດບັນທຶກຄວາມເຂົ້າໃຈໃນຄັ້ງນີ້ເປົ້າໝາຍແມ່ນເພື່ອຮ່ວມມືໃນການສຶກສາຄວາມເປັນໄປໄດ້ ການພັດທະນາລະບົບໂປຣແກຣມ (Software) ເພື່ອຫັນວຽກງານຂອງກະຊວງກະສິກຳ ແລະ ປ່າໄມ້ ເປັນທັນສະໄໝ ພັດທະນາລະບົບອະນຸມັດ ແລະ ຕິດຕາມ ການນຳເຂົ້າ ແລະ ສົ່ງອອກສິນຄ້າກະສິກຳ ໂດຍເຊື່ອມໂຍງກັບກົມພາສີ, ກົມສວຍສາອາກອນ (ກະຊວງການເງິນ)

ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຄວາມສະດວກໃນການສົ່ງເສີມ ແລະ ຄຸ້ມຄອງການນຳເຂົ້າ-ສົ່ງອອກ ສິນຄ້າກະສິກຳ ເພື່ອໃຫ້ສາມາດເກັບກຳຂໍ້ມູນລາຍຮັບຈາກການນຳເຂົ້າ ແລະ ສົ່ງອອກສິນຄ້າກະສິກຳ, ຂັ້ນຕອນການຮັບຮອງເພື່ອອອກໃບຢັ້ງຢືນຄວາມປອດໄພ ຂອງສິນຄ້າກະສິກຳ, ພັດທະນາລະບົບອອກອະນຸມັດໃນການສ້າງຕັ້ງຟາມກະສິກຳ, ໂຮງງານປຸງແຕ່ງກະສິກຳ ແລະ ລະບົບແຜນທີ່ກະສິກຳແບບ Digital Map ລວມທັງລະບົບແຜນທີ່ປ່າໄມ້, ລະບົບລາຍງານຜົນການຜະລິດ ແລະ ການຈຳໜ່າຍ ຂອງໂຮງສີເຂົ້າ ເມືອງສອງຄອນ ແຂວງສະຫວັນນະເຂດ ເພື່ອຕົວແບບ ແລະ ຂະຫຍາຍອອກສູ່ວົງກວ້າງໃນອະນາຄົດ, ພັດທະນາລະບົບ ການຕິດຕາມການຈະລາຈອນເອກະສານພາຍໃນ, ການວິເຄາະຂໍ້ມູນ, ການລາຍງານຂໍ້ມູນ ແລະ ແຈ້ງການ ຂອງກະຊວງກະສິກຳ ແລະ ປ່າໄມ້.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;